ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0479 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 05 ເມສາ 2023

# ຄຳແນະນຳ

## ກ່ຽວກັບການແຈ້ງການຢັ້ງຢືນຮັບຮູ້ ແລະ ການຂໍອະນຸຍາດ ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

- ອີງຕາມ ດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 1060/ກຄພນ, ລົງວັນທີ 01 ພະຈິກ 2022.

### ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:

**I. ຈຸດປະສົງ**

1. ເພື່ອຜັນຂະຫຍາຍເນື້ອໃນມາດຕາ 6 ຫາ 17, 35 ຫາ 40, 42, 51 ແລະ ມາດຕາ 59 ຂອງດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021 ໃຫ້ເປັນອັນລະອຽດ, ຈະແຈ້ງ, ຊັດເຈນ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ;

2. ເພື່ອແນະນຳ, ອະທິບາຍເພີ່ມເຕີມ ກ່ຽວກັບການຄຸ້ມຄອງການແຈ້ງ, ການຢັ້ງຢືນຮັບຮູ້ ແລະ ການອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;

3. ເພື່ອສົ່ງເສີມການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃຫ້ມີການຂະຫຍາຍຕົວ, ຮັບປະກັນໄດ້ການແຂ່ງຂັນທີ່ເປັນທຳ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ປະກອບການ ແລະ ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**II. ຄຳແນະນຳເພີ່ມເຕີມບາງເນື້ອໃນ**

**1. ພາກທີ III ໝວດທີ 1 ການແຈ້ງການຄ້າທາງເອເລັກໂຕຣນິກ**

**1.1 ມາດຕາ 10 ການແຈ້ງການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ການແຈ້ງການຄ້າທາງເອເລັກໂຕຣນິກ ແມ່ນການສະໜອງຂໍ້ມູນຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ຫຼື ການຄ້າໃນຕະຫຼາດເອເລັກໂຕຣນິກ ແລະ ການບໍລິການຕະຫຼາດທາງເອເລັກໂຕຣນິກ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກຂອງຕົນ ຫຼື ການຄ້າໃນຕະຫຼາດທາງເອເລັກໂຕຣນິກ ແລະ ການບໍລິການຕະຫຼາດທາງເອເລັກໂຕຣນິກ ຕ້ອງແຈ້ງໃຫ້ກົມການຄ້າພາຍໃນ ເພື່ອຄົ້ນຄວ້າພິຈາລະນາຢັ້ງຢືນຮັບຮູ້ ແລະ ອະນຸຍາດການຄ້າທາງເອເລັກໂຕຣນິກ ພາຍໃນ ເກົ້າສິບ ວັນ ນັບແຕ່ຄຳແນະນຳສະບັບນີ້ມີຜົນບັງຄັບໃຊ້ເປັນຕົ້ນໄປ, ຖ້າບໍ່ມາຂໍອະນຸຍາດດຳເນີນທຸລະກິດຕາມກຳນົດເວລາດັ່ງກ່າວ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**1.2 ມາດຕາ 11 ເອກະສານປະກອບການແຈ້ງການຄ້າທາງເອເລັກໂຕຣນິກ**

ເອກະສານປະກອບການແຈ້ງ ເພື່ອຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ຕາມແຕ່ລະກໍລະນີ ມີດັ່ງນີ້:

**ກ. ສຳລັບຫົວໜ່ວຍທຸລະກິດ**

1) ຄຳຮ້ອງຕາມແບບພິມຂອງກົມການຄ້າພາຍໃນ;
2) ສຳເນົາໃບທະບຽນວິສາຫະກິດ ຍົກເວັ້ນຫົວໜ່ວຍທຸລະກິດ ທີ່ບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ;
3) ສຳເນົາໃບອະນຸຍາດດຳເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
4) ສຳເນົາເອກະສານຢັ້ງຢືນການນຳໃຊ້ບໍລິການຊຳລະ ຢູ່ ສປປ ລາວ;
5) ຮູບຂະໜາດ 3X4 ພື້ນສີຂາວ ຈຳນວນ 2 ໃບ ຖ່າຍບໍ່ເກີນ 3 ເດືອນ;
6) ໃບມອບສັນທະ ໃນກໍລະນີ ບໍ່ສາມາດດຳເນີນເອກະສານດ້ວຍຕົນເອງ.

**ຂ. ສຳລັບບຸກຄົນ**

1) ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2) ສຳເນົາບັດປະຈຳຕົວ ຫຼື ປື້ມສຳມະໂນຄົວ;
3) ໃບຢັ້ງຢືນທີ່ຢູ່;
4) ສຳເນົາເອກະສານຢັ້ງຢືນການນຳໃຊ້ບໍລິການຊຳລະ ຢູ່ ສປປ ລາວ;
5) ຮູບຂະໜາດ 3X4 ພື້ນສີຂາວ ຈຳນວນ 2 ໃບ ຖ່າຍບໍ່ເກີນ 3 ເດືອນ;
6) ໃບມອບສັນທະ ໃນກໍລະນີບໍ່ສາມາດດຳເນີນເອກະສານດ້ວຍຕົນເອງ.

**1.3 ມາດຕາ 12 ການຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ກົມການຄ້າພາຍໃນ ຕ້ອງພິຈາລະນາອອກໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ພາຍໃນ ສາມ ວັນລັດຖະການ. ໃນກໍລະນີການປະກອບເອກະສານບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ປະຕິເສດການຮ້ອງຂໍ ກົມການຄ້າພາຍໃນ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ເພື່ອໃຫ້ຜູ້ດຳເນີນທຸລະກິດ ປະກອບເອກະສານເພີ່ມຕື່ມໃຫ້ຖືກຕ້ອງ, ຄົບຖ້ວນ ເພື່ອສົ່ງໃຫ້ກົມການຄ້າພາຍໃນ ຄົ້ນຄວ້າພິຈາລະນາຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກດັ່ງກ່າວ.

ກໍລະນີ ຜູ້ຄ້າທາງເອເລັກໂຕຣນິກ ແຈ້ງການດຳເນີນທຸລະກິດໃນຮູບແບບຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ແລະ ຮູບແບບການຄ້າໃນຕະຫຼາດທາງເອເລັກໂຕຣນິກ ຫຼື ແຈ້ງຫຼາຍປະເພດສິນຄ້າ ຫຼື ການບໍລິການ ແມ່ນສາມາດອອກໃບຢັ້ງຢືນຮັບຮູ້ໃນສະບັບດຽວ ໂດຍບໍ່ຈຳເປັນຕ້ອງອອກໃບຢັ້ງຢືນແຍກເປັນແຕ່ລະຮູບແບບການຄ້າ, ປະເພດສິນຄ້າ ຫຼື ການບໍລິການ.

ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ມີສອງຮູບແບບ ຄື: ຮູບແບບສິ່ງພິມ ຫຼື ຮູບແບບເອເລັກໂຕຣນິກ ຜ່ານຊ່ອງທາງເອເລັກໂຕຣນິກທີ່ກຳນົດໂດຍກົມການຄ້າພາຍໃນ. ທັງສອງຮູບແບບ ແມ່ນມີຄຸນຄ່າ ແລະ ຜົນສັກສິດທາງດ້ານກົດໝາຍເທົ່າທຽມກັນ.

ການຮັບຮູ້ການຄ້າທາງເອເລັກໂຕຣນິກ ບໍ່ແມ່ນການອະນຸຍາດດຳເນີນທຸລະກິດ ແຕ່ເປັນການຢັ້ງຢືນຮັບຮູ້ຕົວຕົນຂອງຜູ້ຄ້າທາງເອເລັກໂຕຣນິກ ເພື່ອສ້າງຄວາມໝັ້ນໃຈໃນການຊື້-ຂາຍ ແລະ ເປັນບ່ອນອີງໃນການແກ້ໄຂຂໍ້ຂັດແຍ່ງ.

### 1.4 ມາດຕາ 13 ການນຳໃຊ້, ອາຍຸການນຳໃຊ້ ແລະ ການດັດແກ້ເນື້ອໃນໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ

ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ມີອາຍຸນຳໃຊ້ສອງປີ ແລະ ສາມາດຕໍ່ໄດ້. ການຕໍ່ອາຍຸໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ແມ່ນໃຫ້ສະເໜີຕໍ່ກົມການຄ້າພາຍໃນ ຢ່າງໜ້ອຍສາມສິບວັນກ່ອນໃບຢັ້ງຢືນໝົດອາຍຸ.

ການດັດແກ້ເນື້ອໃນໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ແມ່ນປັບປຸງເນື້ອໃນໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ເປັນຕົ້ນ ການເພີ່ມ ຫຼື ຫຼຸດຈຳນວນສິນຄ້າ ຫຼື ການບໍລິການ, ຮູບແບບການຄ້າທາງເອເລັກໂຕຣນິກ, ຂໍ້ມູນສ່ວນຕົວຂອງຜູ້ແຈ້ງ ແລະ ຂໍ້ມູນອື່ນໆ ເພື່ອຮ້ອງຂໍໃຫ້ກົມການຄ້າພາຍໃນຄົ້ນຄວ້າພິຈາລະນາອອກໃບຢັ້ງຢືນຮັບຮູ້ຄືນໃໝ່.

ການອອກໃບຢັ້ງຢືນຮັບຮູ້ຄືນໃຫມ່ ແມ່ນການອອກໃບຢັ້ງຢືນຮັບຮູ້ດັ່ງກ່າວຄືນໃໝ່ ໃນກໍລະນີໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ເສຍຫາຍ ຫຼື ຖືກທຳລາຍ.

ການຕໍ່ອາຍຸ, ການດັດແກ້ເນື້ອໃນ ຫຼື ການອອກ ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກຄືນໃໝ່ ໃຫ້ປະກອບເອກະສານຄຳຮ້ອງ ຍື່ນຕໍ່ກົມການຄ້າພາຍໃນ ດັ່ງນີ້:

1) ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2) ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ສະບັບຕົ້ນ ຫຼື ສຳເນົາ;
3) ສຳເນົາໃບອະນຸຍາດດຳເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
4) ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
5) ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ ຕາມແບບພິມຂອງກົມການຄ້າພາຍໃນ;
6) ຫຼັກຖານອ້າງອີງ ໃນກໍລະນີໃບຢັ້ງຢືນເສຍຫາຍ.

### 1.5 ການຍົກເລີກ ຫຼື ລຶບລ້າງ ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ

ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ຈະຖືກຍົກເລີກ ຫຼື ລຶບລ້າງ ໃນກໍລະນີ ດັ່ງນີ້:

1) ຜູ້ດຳເນີນທຸລະກິດບໍ່ປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 36, ມາດຕາ 38 ແລະ ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ;
2) ຜູ້ດຳເນີນທຸລະກິດສະເໜີຢຸດເຊົາການດຳເນີນທຸລະກິດດ້ວຍຄວາມສະໝັກໃຈ;
3) ມີຄຳຕັດສິນຂອງສານປະຊາຊົນ ໃຫ້ລົ້ມລະລາຍ ຫຼື ໃຫ້ຢຸດເຊົາການດຳເນີນທຸລະກິດ ຕາມກົດໝາຍ.

## 2. ພາກທີ III ໝວດທີ 2 ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

### 2.1 ມາດຕາ 14 ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃນຮູບແບບການໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ຕ້ອງປະກອບເອກະສານຄຳຮ້ອງ ຍື່ນຕໍ່ກົມການຄ້າພາຍໃນ ເພື່ອພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍລິການຕະຫຼາດການຄ້າເອເລັກໂຕຣນິກ.

**2.2 ມາດຕາ 15 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ເອກະສານປະກອບ ເພື່ອຂໍອະນຸຍາດດຳເນີນທຸລະກິດການຄ້າເອເລັກໂຕຣນິກ ມີດັ່ງນີ້:

1) ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2) ສຳເນົາໃບທະບຽນວິສາຫະກິດ;
3) ແຜນດຳເນີນທຸລະກິດ ຕ້ອງປະກອບມີເນື້ອໃນຕົ້ນຕໍ ຄື: 1 ຈຸດປະສົງ ແລະ ເປົ້າໝາຍ, 2 ການຮັບຜູ້ຄ້າໃນຕະຫຼາດເອເລັກໂຕຣນິກ, 3 ການຈ່າຍຜົນຕອບແທນ ແລະ 4 ກົນໄກການແກ້ໄຂຂໍ້ຂັດແຍ່ງ;
4) ໃບຢັ້ງຢືນມາດຕະຖານດ້ານເຕັກນິກຂອງຊ່ອງທາງການຄ້າທາງເອເລັກໂຕຣນິກຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;
5) ໃບອະນຸຍາດນຳໃຊ້ບໍລິການຊຳລະທາງເອເລັກໂຕຣນິກ ຕາມລະບຽບການສະເພາະທີ່ທະນາຄານ ແຫ່ງ ສປປ ລາວ ກຳນົດ;
6) ຮູບຂະໜາດ 3x4 ພື້ນສີຂາວຈຳນວນ 2 ໃບ ຖ່າຍບໍ່ເກີນ 3 ເດືອນ;
7) ໃບມອບສິດທະ ໃນກໍລະນີບໍ່ສາມາດດຳເນີນເອກະສານດ້ວຍຕົນເອງ.

**2.3 ມາດຕາ 16 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ກົມການຄ້າພາຍໃນ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ພາຍໃນ ຫ້າ ວັນລັດຖະການ. ໃນກໍລະນີການປະກອບເອກະສານບໍ່ຄົບຖ້ວນ, ບໍ່ຖືກຕ້ອງ ຫຼື ປະຕິເສດການຮ້ອງຂໍ ກົມການຄ້າພາຍໃນ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ເພື່ອໃຫ້ຜູ້ຂໍອະນຸຍາດດຳເນີນທຸລະກິດ ປະກອບເອກະສານເພີ່ມຕື່ມໃຫ້ຖືກຕ້ອງ, ຄົບຖ້ວນ ເພື່ອສົ່ງໃຫ້ກົມການຄ້າພາຍໃນຄົ້ນຄວ້າພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ດັ່ງກ່າວ.

ກໍລະນີ ຜູ້ໃຫ້ບໍລິການຕະຫຼາດທາງເອເລັກໂຕຣນິກ ມີວັດຖຸປະສົງດຳເນີນທຸລະກິດໃນຮູບແບບຜ່ານຊ່ອງທາງເອເລັກໂຕຣນິກຂອງຕົນ ແລະ ຮູບແບບການຄ້າໃນຕະຫຼາດທາງເອເລັກໂຕຣນິກ ຫຼື ແຈ້ງຫຼາຍປະເພດສິນຄ້າ ຫຼື ການບໍລິການ ແມ່ນສາມາດອອກໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກສະບັບດຽວ ໂດຍບໍ່ຈຳເປັນຕ້ອງອອກໃບຢັ້ງຢືນຮັບຮູ້ ແລະ ໃບອະນຸຍາດ ແຍກເປັນແຕ່ລະຮູບແບບການຄ້າທາງເອເລັກໂຕຣນິກ, ປະເພດສິນຄ້າ ຫຼື ການບໍລິການ.

ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ມີສອງຮູບແບບ ຄື: ຮູບແບບສິ່ງພິມ ຫຼື ຮູບແບບເອເລັກໂຕຣນິກ ຜ່ານຊ່ອງທາງເອເລັກໂຕຣນິກ ທີ່ກຳນົດໂດຍກົມການຄ້າພາຍໃນ. ທັງສອງຮູບແບບ ແມ່ນມີຄຸນຄ່າ ແລະ ຜົນສັກສິດທາງດ້ານກົດໝາຍເທົ່າທຽມກັນ.

**2.4 ມາດຕາ 17 ການນຳໃຊ້, ອາຍຸການນຳໃຊ້ ແລະ ການດັດແກ້ເນື້ອໃນໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ**

ໃບອະນຸຍາດການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ມີອາຍຸນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້. ການຕໍ່ອາຍຸໃບອະນຸຍາດ ໃຫ້ຍື່ນຄຳຮ້ອງຕໍ່ກົມການຄ້າພາຍໃນ ຢ່າງໜ້ອຍ ສາມສິບ ວັນ ກ່ອນໃບອະນຸຍາດດັ່ງກ່າວໝົດອາຍຸ.

ການດັດແກ້ເນື້ອໃນໃບອະນຸຍາດ ແມ່ນປັບປຸງເນື້ອໃນໃບອະນຸຍາດການຄ້າທາງເອເລັກໂຕຣນິກ ເປັນຕົ້ນການເພີ່ມ ຫຼື ຫຼຸດຈຳນວນສິນຄ້າ ຫຼື ການບໍລິການ, ຮູບແບບການຄ້າທາງເອເລັກໂຕຣນິກ, ແຜນການດຳເນີນທຸລະກິດ, ຂໍ້ມູນສ່ວນຕົວຂອງຜູ້ແຈ້ງ ແລະ ຂໍ້ມູນອື່ນໆ ເພື່ອຮ້ອງຂໍໃຫ້ກົມການຄ້າພາຍໃນ ຄົ້ນຄວ້າພິຈາລະນາອອກໃບອະນຸຍາດຄືນໃໝ່.

ການອອກໃບອະນຸຍາດຄືນໃໝ່ ແມ່ນການອອກໃບອະນຸຍາດດັ່ງກ່າວຄືນໃໝ່ ກໍລະນີໃບອະນຸຍາດ ເສຍຫາຍ ຫຼື ຖືກທໍາລາຍ.

ການຕໍ່ອາຍຸ, ການດັດແກ້ເນື້ອໃນ ຫຼື ການອອກ ໃບອະນຸຍາດການຄ້າທາງເອເລັກໂຕຣນິກຄືນໃໝ່ ໃຫ້ປະກອບເອກະສານ ຄໍາຮ້ອງຍື່ນຕໍ່ກົມການຄ້າພາຍໃນ ດັ່ງນີ້:

**ກ. ການຕໍ່ອາຍຸ**

1) ຄໍາຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2) ໃບອະນຸຍາດດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ ສະບັບຕົ້ນ ຫຼື ສໍາເນົາ;
3) ສໍາເນົາໃບອະນຸຍາດດໍາເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
4) ໃບຢັ້ງຢືນການມອບພັນທະອາກອນ ປະຈໍາປີ;
5) ບົດສະຫຼຸບການດໍາເນີນທຸລະກິດ ປະຈໍາປີ ຕາມແບບພິມຂອງກົມການຄ້າພາຍໃນ;
6) ໃບມອບສັນທະ ໃນກໍລະນີບໍ່ສາມາດດໍາເນີນເອກະສານດ້ວຍຕົນເອງ.

**ຂ. ການດັດແກ້ເນື້ອໃນ**

1) ຄໍາຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2) ໃບອະນຸຍາດດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ ສະບັບຕົ້ນ;
3) ແຜນດໍາເນີນທຸລະກິດ;
4) ໃບມອບສັນທະ ໃນກໍລະນີບໍ່ສາມາດດໍາເນີນເອກະສານດ້ວຍຕົນເອງ.

**ຄ. ການອອກໃບອະນຸຍາດດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຄືນໃໝ່**

1) ຄໍາຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2) ສໍາເນົາໃບອະນຸຍາດດໍາເນີນທຸລະກິດການຄ້າເອເລັກໂຕຣນິກ ສະບັບສໍາເນົາ;
3) ສໍາເນົາໃບອະນຸຍາດດໍາເນີນທຸລະກິດ ຖ້າເປັນກິດຈະການທີ່ຕ້ອງຂໍອະນຸຍາດ;
4) ໃບຢັ້ງຢືນການມອບພັນທະອາກອນ ປະຈໍາປີ;
5) ຫຼັກຖານອ້າງອີງ ໃນກໍລະນີອະນຸຍາດດໍາເນີນທຸລະກິດເສຍຫາຍ;
6) ໃບມອບສັນທະ ໃນກໍລະນີບໍ່ສາມາດດໍາເນີນເອກະສານດ້ວຍຕົນເອງ.

**2.5 ການຍົກເລີກ ຫຼື ລຶບລ້າງ ໃບອະນຸຍາດດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ**

ໃບອະນຸຍາດດໍາເນີນທຸລະກິດການຄ້າທາງເອເລັກໂຕຣນິກ ຈະຖືກຍົກເລີກ ຫຼື ລຶບລ້າງ ໃນກໍລະນີ ດັ່ງນີ້:

1) ຜູ້ດໍາເນີນທຸລະກິດ ບໍ່ປະຕິບັດພັນທະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 40 ແລະ ລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງດໍາລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ;
2) ຜູ້ດໍາເນີນທຸລະກິດ ສະເໜີຢຸດເຊົາການດໍາເນີນທຸລະກິດ ດ້ວຍຄວາມສະໝັກໃຈ;
3) ມີຄໍາຕັດສິນຈາກສານປະຊາຊົນ ໃຫ້ລົ້ມລະລາຍ ຫຼື ໃຫ້ຢຸດເຊົາການດໍາເນີນທຸລະກິດ ຕາມກົດໝາຍ.

**3. ຄ່າທໍານຽມ ແລະ ຄ່າບໍລິການ ການອອກໃບຢັ້ງຢືນຮັບຮູ້ ແລະ ໃບອະນຸຍາດການຄ້າທາງເອເລັກໂຕຣນິກ**

ຄ່າທໍານຽມ ແລະ ຄ່າບໍລິການ ສໍາລັບການອອກໃບຢັ້ງຢືນຮັບຮູ້ ແລະ ໃບອະນຸຍາດການຄ້າທາງເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມລະບຽບສະເພາະໄປກ່ອນ ຈົນກວ່າຈະມີການປັບປຸງລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 21 ມິຖຸນາ 2021.

**4. ການຄຸ້ມຄອງ ວຽກງານການຄ້າທາງເອເລັກໂຕຣນິກຂອງຂະແໜງການອຸດສາຫະກຳ ແລະ ການຄ້າ**

ການຄຸ້ມຄອງ ວຽກງານການຄ້າທາງເອເລັກໂຕຣນິກ ປະກອບມີ ສາມ ຂັ້ນ ດັ່ງນີ້:

1) ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ;

2) ຂັ້ນແຂວງ ແມ່ນພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

3) ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**4.1 ສິດ ແລະ ໜ້າທີ່ຂອງ ກົມການຄ້າພາຍໃນ**

ກົມການຄ້າພາຍໃນ ມີສິດ ແລະ ໜ້າທີ ດັ່ງນີ້:

1) ຄົ້ນຄວ້າສ້າງ, ເຜີຍແຜ່, ແນະນຳບັນດານິຕິກຳ ກ່ຽວກັບການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;

2) ຊຸກຍູ້ ສ້າງບັນຍາກາດ, ສະພາບແວດລ້ອມທີ່ດຶງດູດ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;

3) ຄົ້ນຄວ້າພິຈາລະນາອອກ, ໂຈະ, ຍົກເລີກ, ລຶບລ້າງ, ດັດແກ້, ອອກຄືນໃໝ່ ໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ແລະ ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ;

4) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;

5) ພັດທະນາ, ປັບປຸງ ແລະ ບຳລຸງຮັກສາລະບົບຖານຂໍ້ມູນການຄ້າທາງເອເລັກໂຕຣນິກ ລວມທັງເກັບກຳສະຖິຕິການຄ້າທາງເອເລັກໂຕຣນິກ;

6) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊຸກຍູ້ໃຫ້ມີການສ້າງຕັ້ງສະມາຄົມການຄ້າທາງເອເລັກໂຕຣນິກ ຢູ່ ສປປ ລາວ;

7) ສະຫຼຸບລາຍງານການຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງການຄ້າທາງເອເລັກໂຕຣນິກ ໃຫ້ຂັ້ນເທິງຮັບຊາບເປັນແຕ່ລະໄລຍະ;

8) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**4.2 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ເຜີຍແຜ່, ແນະນຳບັນດານິຕິກຳ ກ່ຽວກັບການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງພາຍໃນແຂວງຂອງຕົນ;

2) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;

3) ປະສານສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງຫົວໜ່ວຍທຸລະກິດການຄ້າທາງເອເລັກໂຕຣນິກໃນແຂວງຂອງຕົນ;

4) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**4.3 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ເຜີຍແຜ່, ແນະນຳບັນດານິຕິກຳ ກ່ຽວກັບການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກໃຫ້ສັງຄົມຮັບຊາບ ຢ່າງທົ່ວເຖິງພາຍໃນຂອບເຂດເມືອງ, ນະຄອນ ຂອງຕົນ;
2) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຂໍ້ຂັດແຍ່ງດ້ານການຄ້າທາງເອເລັກໂຕຣນິກ;
3) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວຂອງຫົວໜ່ວຍທຸລະກິດການຄ້າທາງເອເລັກໂຕຣນິກໃນເມືອງ, ນະຄອນ ຂອງຕົນ;
4) ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

III. ການຈັດຕັ້ງປະຕິບັດ

1. ມອບໃຫ້ກົມການຄ້າພາຍໃນ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ ແລະ ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

2. ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ